ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້
ກອງທຶນຫລຸດຜ່ອນຄວາມທຸກຍາກ (ທລຍ)

ເລກທີ 0738/ທລຍ
ນະຄອນຫລວງວຽງຈັນ, ວັນທີ 25 OCT 2022

# ໜັງສືເຊີນເຂົ້າຮ່ວມປະມູນສົມທຽບລາຄາ

ຈັດຊື້ເຄື່ອງອຸປະກອນໄອທີ ເພື່ອຮັບໃຊ້ໃຫ້ແກ່ການຈັດຕັ້ງປະຕິບັດໂຄງການ
ສັນຍາເລກທີ: PRF.III-AF/Tablet-IT Equipment/G-S/2022 (AF-G..031)

ເຖິງ: ______________________________

1. ລັດຖະບານ ສປປ ລາວ ໄດ້ຮັບທຶນກູ້ຢືມ ຈາກສະມາຄົມພັດທະນາສາກົນ (IDA), ທະນາຄານໂລກ ເພື່ອຈັດຕັ້ງປະຕິບັດໂຄງການກອງທຶນຫລຸດຜ່ອນຄວາມ ທຸກຍາກ III - ໄລຍະທຶນເພີ້ມ ແລະ ມີຈຸດປະສົງທີ່ຈະນຳໃຊ້ທຶນສ່ວນໜຶ່ງ ເຂົ້າໃນການຈັດຊື້ເຄື່ອງອຸປະກອນໄອທີ ເພື່ອຮັບໃຊ້ໃຫ້ແກ່ການຈັດຕັ້ງປະຕິບັດໂຄງການ, ດ້ວຍການສະເໜີໃຫ້ຍື່ນຊອງປະມູນເພື່ອສົມທຽບລາຄາ.
2. ກອງທຶນຫລຸດຜ່ອນຄວາມທຸກຍາກ ຂໍເຊີນຮ້ານ/ບໍລິສັດຂອງທ່ານ ເຂົ້າຍື່ນຊອງສົມທຽບລາຄາ ສຳລັບການຈັດຊື້ເຄື່ອງດັ່ງກ່າວຂ້າງເທິງ, ໄລຍະເວລາໃນການສົ່ງມອບແມ່ນ 45 ວັນ.
3. ການປະມູນນີ້ ຈະດຳເນີນຕາມຂັ້ນຕອນການປະມູນສົມທຽບລາຄາ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ, ສະບັບເລກທີ 0047/ກງ, ລົງວັນທີ 13 ກຸມພາ 2019.
4. ຊອງສະເໜີລາຄາ ຈະຕ້ອງສົ່ງກ່ອນເວລາ 10:00 ໂມງ ຂອງວັນທີ 25/11/2022 ຢູ່ທີ່ຫ້ອງການກອງທຶນຫລຸດຜ່ອນຄວາມທຸກຍາກ, ແລະ ຊອງປະມູນທຸກໆຊອງ ຈະໄດ້ເປີດໃນເວລາ 10:00 ໂມງ, ຂອງວັນທີ 25/11/2022 ຢູ່ທີ່ຫ້ອງການທລຍ ຕັ້ງຢູ່ໃນຫ້ອງການລັດຖະບານ, ຖະໜົນ ລ້ານຊ້າງ, ບ້ານ ນາໄຊ້ດຽວ, ເມືອງ ຈັນທະບູລີ, ນະຄອນຫລວງວຽງຈັນ, ສປປ ລາວ.
5. ທ່ານສາມາດສອບຖາມຂໍ້ມູນເພີ້ມເຕີມ ໄດ້ທີ່ຫ້ອງການ ທລຍ, ຕາມວັນ ແລະ ເວລາເຮັດວຽກ ໂທ: 261479-80 (ຕໍ່ 105).

ກອງທຶນຫລຸດຜ່ອນຄວາມທຸກຍາກ,
ຜູ້ອຳນວຍການ

ພັດນະຄອນ ຄົນທະມີໄຊ